*Office of Refugee and Immigrant Assistance*
*Economic Services Administration*

Washington State Department of Social & Health Services
*Transforming lives*

# ລາຍລະອຽດສຳຄັນກ່ຽວກັບການປ່ຽນແປງໃນກົດລະບຽບຂອງການເຂົ້າເມືອງມາຕັ້ງຖິ່ນຖານຕໍ່ການຊ່ວຍເຫລືອສາທາລະນະຊົນຕ່າງໆ

ກົມ Department of Social and Health Services (DSHS) ຂອງລັດວໍຊິງເຂົ້າໃຈວ່າກົມ Department of Homeland Security ໄດ້ຕີພິມກົດລະບຽບຂັ້ນສຸດທ້າຍອອກມາທີ່ສາມາດໃຊ້ໄດ້ນຳບຸກຄົນຜູ້ທີ່ໄດ້ຮັບການຊ່ວຍເຫລືອສາທາລະນະຊົນທີ່ຖືກກ່າວມາ. ພວກເຮົາໄດ້ກວດເບິ່ງກົດລະບຽບຄືນ ແລະ ຢາກຈະເອົາລາຍລະອຽດອັນຖືກຕ້ອງ, ເຊື່ອຖືໄດ້ສຳລັບບຸກຄົນແລະ ຄອບຄົວຜູ້ທີ່ອາດຈະຖືກສະທ້ອນເຖິງໂດຍນະໂຍບາຍທີ່ປ່ຽນແປງ. ອັນນີ້ແມ່ນສິ່ງທີ່ພວກເຮົາຮູ້ຈັກ:

- ໂຄງການ ແລະ ການບໍລິການທີ່ຖືກບໍລິຫານໂດຍ Department of Social and Health Services (DSHS) ຂອງລັດວໍຊິງຕັນຍັງຈະມີຢູ່ຄືເກົ່າ ແລະ ເຂົ້າເຖິງໄດ້ສຳລັບບຸກຄົນຜູ້ທີ່ມີເງື່ອນໄຂໄດ້ຮັບ.

- DSHS ດຳເນີນຕໍ່ໄປທີ່ຈະປົກປ້ອງຄວາມລັບສ່ວນຕົວຂອງລາຍລະອຽດສ່ວນບຸກຄົນຂອງຜູ້ຮັບການຊ່ວຍເຫລືອ ແລະ ຈະບໍ່ແລກປ່ຽນລາຍລະ ອຽດອັນນີ້ນອກຈາກວ່າຖືກບົ່ງບອກໂດຍກົດໝາຍຂອງລັດ ຫລື ລັດຖະບານກາງ.

- ການປ່ຽນແປງອາດຈະສະທ້ອນເຖິງບຸກຄົນຜູ້ທີ່ກຳລັງຮ້ອງຂໍເອົາການເຂົ້າມາອາສັຍຢູ່ຖາວອນຖືກຕ້ອງຕາມກົດໝາຍ  (ບັດຂຽວ) ຫລື ການເຂົ້າມາສະຫາລັດອະເມຣິກາ, ລວມທັງຄົນເຂົ້າເມືອງດ້ວຍວີຊາຄົນຕ່າງເຊື້ອຊາດ ແລະ ຄຳຮ້ອງຂໍຕໍ່ໃຫມ່, ປ່ຽນແປງ ຫລື ຕໍ່ວີຊາຂອງເຂົາ ເຈົ້າຢູ່ໃນສະຫາລັດອະເມຣິກາ.

- ການປ່ຽນແປງບໍ່ສະທ້ອນເຖິງບຸກຄົນຜູ້ອາສັຍຢູ່ຖາວອນຖືກຕ້ອງຕາມກົດໝາຍທີ່ກຳລັງຂໍເອົາການເປັນສັນຊາດ U.S. ຫລື ການປ່ຽນສັນຊາດຂອງເຂົາເຈົ້າ.

- ກົດລະບຽບໃຫມ່ອັນນີ້ຈະບໍ່ກ່ຽວກັບທຸກໆຄົນ. ມັນຈະບໍ່ກ່ຽວກັບບຸກຄົນຜູ້ທີ່ເປັນຄົນອົພຍົບ ແລະ ຄົນລີ້ພັຍການເມືອງ, ຄົນເຂົ້າເມືອງຖານະເປັນລູກເຄິ່ງອະເມຣິກາເອເຊັຽ, ຄົນຖືວີຊາຄົນເຂົ້າເມືອງພິເສດຄົນອັຟການິສຖານ ແລະ ອີຣັກກີ, ຄົນເຂົ້າເມືອງມາຈາກຄິວບາ/ເຮຕີ, ຄົນຖືກ ປ່ອຍເຂົ້າມາຍ້ອນມະນຸສທັມ, ຄົນເຄາະຮ້າຍຈາກການຄ້າມະນຸດ (T-Visa), ຄົນເຄາະຮ້າຍຈາກການເຄື່ອນໄຫວອາດສະຍາກັມ (U-Visa), ຊາວຫນຸ່ມເຂົ້າເມືອງພິເສດ ຫລື ຜູ້ຍື່ນຂໍເອົາໂດຍຕົນເອງ VAWA (Violence Against Women Act).

- ໃນຜ່ານມາ, ເຈົ້າຫນ້າທີ່ຈະໄລ່ເອົາແຕ່ການໃຊ້ການຊ່ວຍເຫລືອເງິນ ສົດ ຫລື ການນອນໂຮງພະຍາບານລະຍະຍາວຂອງຜູ້ຮັບການຊ່ວຍເຫລືອເທົ່ານັ້ນເມື່ອເວລາພິຈາລະນາເບິ່ງຄຳຮ້ອງຂໍການເຂົ້າເມືອງມາຕັ້ງຖິ່ນຖານ. ການປ່ຽນແປງຈະຕື່ມການປິ່ນປົວສຸຂະພາບຂອງລັດຖະບານກາງບາງຢ່າງໃສ່ນຳ, ສະວັດດີການອາຫານການກິນ ແລະ ບ່ອນຢູ່ອາສັຍ,

- ນະໂຍບາຍຈະບໍ່ຖືກໄລ່ຍ້ອນຫລັງໃສ່ສະວັດດີການຊ່ວຍເຫລືອທີ່ໄດ້ຮັບແລ້ວກ່ອນວັນທີທີ່ມີຜົນບັງຄັບໃຊ້ໄດ້ຂອງກົດລະບຽບ.ສະວັດດີການຊ່ວຍເຫລືອຂອງລັດຖະບານກາງເພີ້ມເຕີມເຫລົ່ານີ້ຈະຖືກພິຈາລະນາເບິ່ງເທົ່ານັ້ນຖ້າຫາກວ່າບຸກຄົນໄດ້ຮ້ອງຂໍເອົາ,ຖືກອະນຸມັດໃຫ້ໄດ້ຮັບ,ຫລືໄດ້ຮັບການຊ່ວຍເຫລືອຫລັງຈາກທີ່ກົດລະບຽບກາຍເປັນໃຊ້ການໄດ້.ໃນປັດຈຸບັນນີ້,ເນື່ອງເປັນຜົນອອກມາຂອງການສັ່ງອອກມາຈາກສານທີ່ກີດກັ້ນກົດລະບຽບ,ພວກເຮົາບໍ່ຮູ້ຈັກວັນທີທີ່ມັນຈະກາຍເປັນໃຊ້ການໄດ້.

ພິມອອກມາໃນເດືອນອົກໂຕເບີ 22, 2019

ຕໍ່ຢູ່ຫນ້າຕໍ່ໄປ

- ການປ່ຽນແປງຈະບໍ່ກ່ຽວຂ້ອງນຳສະວັດດີການຊ່ວຍເຫລືອຂອງຣັດຖະບານກາງທຸກໆຊະນິດ. ສຳລັບລາຍຊື່ຂອງຂອງສະວັດດີການຊ່ວຍເຫລືອທີ່ຖືກລວມເອົາ ຫລື ຖືກຍົກເວັ້ນ, ຈົ່ງເບິ່ງຄຳຖາມທີ່ຖືກຖາມຢູ່ເລື້ອຍໆ. ຈະບໍ່ມີການປ່ຽນແປງແນວໃດຈະຖືກເຮັດຕໍ່ສະວັດດີການຊ່ວຍເຫລືອຂອງຣັດ, ເຖິງແມ່ນວ່າການຊ່ວຍເຫລືອເງິນສົດຂອງຣັດແລະທ້ອງຖິ່ນຈະດຳເນີນທີ່ຈະຖືກພິຈາຣະນາເບິ່ງຢູ່ກໍຕາມ.

- ກົດລະບຽບໃຫມ່ອັນນີ້ບໍ່ໄລ່ເອົາການໃຊ້ສະວັດດີການຊ່ວຍເຫລືອໂດຍສະມາຊິກຄອບຄົວຂອງບຸກຄົນນັ້ນ. ການໃຊ້ສະວັດດີການຊ່ວຍເຫລືອໂດຍລູກ ຫລື ສະມາຊິກຄອບຄົວຄົນອື່ນໆຈະບໍ່ຖືກໄລ່ໃສ່ບຸກຄົນຜູ້ທີ່ສະມັກຂໍເອົາການເຂົ້າມາອາສັຍຢູ່ຖາວອນຖືກຕ້ອງຕາມກົດຫມາຍ (ບັດຂຽວ) ຫລື ການເຂົ້າມາສະຫາຣັດອະເມຣິກາ.

ບຸກຄົນ ແລະ ຄອບຄົວຜູ້ທີ່ມີຄຳຖາມ ຫລື ຄວາມຂ້ອງໃຈແນວໃດກ່ຽວກັບຜົນສະທ້ອນຂອງການໃຊ້ສະວັດດີການຊ່ວຍເຫລືອສາທາຣະນະຊົນຕໍ່ສະພາບການເຂົ້າເມືອງມາຕັ້ງຖິ່ນຖານຂອງເຂົາເຈົ້າຄວນຈະຕິດຕໍ່ຫາທະນາຍຄວາມກ່ຽວກັບການເຂົ້າເມືອງມາຕັ້ງຖິ່ນຖານໄດ້. ຣາຍຣະອຽດຊ່ວຍເ/ຫລືອອາດຈະມີໄວ້ໃຫ້ໂດຍຜ່ານນຶ່ງຂອງອົງການທີ່ຖືກບົ່ງຢູ່ໃນແວບໄຊທ໌ຂອງເຈົ້າແຂວງຣັດ: https://www.governor.wa.gov/issues/issues/safe-communities/immigration-and-refugee-resources.

ນອກຈາກນັ້ນອີກ, ທ່ານຈະຕິດຕໍ່ຫານຶ່ງຂອງອົງການຕໍ່ລົງໄປນີ້ໄດ້ເພື່ອຄວາມຊ່ວຍເຫລືອ:

- CLEAR Hotline: 1-888-201-1014
- Northwest Immigrant Rights Project (NWIRP):
  – ຫ້ອງການ NWIRP Seattle: 206-587-4009
  – ຫ້ອງການ NWIRP Yakima Valley (Granger): 509-854-2100
  – ຫ້ອງການ NWIRP Wenatchee: 509-570-0054

Washington State Department of Social & Health Services

*Transforming lives*

ພິມອອກມາໃນເດືອນອັກໂຕເບີ 22, 2019